ທະນາຄານແຫ່ງ ສປປ ລາວ
BANK OF THE LAO PDR

ຂ່າວ NEWS

ໜ່ວຍງານຂ່າວສານ ພະແນກສັງລວມ ຫ້ອງການ ທຫລ
ໂທ /ແຟັກ ( 856-21) 260283



# ເຜີຍແຜ່ຂໍ້ຕົກລົງວ່າດ້ວຍການຄຸ້ມຄອງທະນະບັດ ໃນຂອດຈໍລະຈອນ






ໃນວັນທີ 17 ພະຈິກ 2020 ຜ່ານມານີ້, ກົມພິມຈຳໜ່າຍ ທະນາຄານແຫ່ງ ສປປ ລາວ (ທຫລ) ໄດ້ຈັດການເຜີຍແຜ່ "ຂໍ້ຕົກລົງວ່າດ້ວຍການຄຸ້ມຄອງທະນະບັດໃນຂອດຈໍລະຈອນ" ທີ່ຫ້ອງປະຊຸມ ທຫລ ໂດຍການເຂົ້າຮ່ວມຂອງທ່ານ ບຸນທະວີ ສຸກດາວົງ ວ່າການຫົວໜ້າກົມພິມຈຳໜ່າຍ (ທຫລ), ມີພາກສ່ວນທະນາຄານທຸລະກິດລັດ, ເອກະຊົນ, ເຂົ້າຮ່ວມທັງໝົດ 69 ທ່ານ.

ການເຜີຍແຜ່ໃນຄັ້ງນີ້, ກໍ່ເພື່ອເຮັດໃຫ້ບັນດາພະນັກງານທີ່ກ່ຽວຂ້ອງຮັບຮູ້ ແລະ ເຂົ້າໃຈຂໍ້ຕົກລົງວ່າດ້ວຍການຄຸ້ມຄອງທະນະບັດໃນຂອດຈໍລະຈອນ ສະບັບເລກທີ 407/ທຫລ, ລົງວັນທີ 10 ກໍລະກົດ 2020 ໃຫ້ມີຄວາມຈະແຈ້ງເປັນເອກະພາບກັນທົ່ວ ທຫລ, ສະຖາບັນການເງິນ ແລະ ໃຫ້ມວນຊົນທົ່ວໄປ ໃນຂອບເຂດທົ່ວປະເທດ, ແນ່ໃສ່ເພື່ອຮັບປະກັນການຈັດຕັ້ງປະຕິບັດໃຫ້ໄດ້ຮັບຜົນດີ ມີປະສິດທິຜົນສູງ.



ຂໍ້ຕົກລົງສະບັບດັ່ງກ່າວປະກອບມີ 8 ໝວດ, 23 ມາດຕາ ແລະ ວິທີການສັງເກດທະນະບັດແທ້, ທະນະບັດປອມ, ລັກສະນະສັງເກດການເສື່ອມຄຸນຂອງທະນະບັດ ທີ່ສາມາດປ່ຽນຄືນໄດ້ ແລະ ບໍ່ສາມາດປ່ຽນຄືນໄດ້ ເຊັ່ນ: ການເຈາະຮູທະນະບັດ, ການຕັດທະນະບັດ ແລະ ການແຕ້ມສີໃສ່ທະນະບັດ ເຮັດໃຫ້ທະນະບັດດັ່ງກ່າວບໍ່ສາມາດຈໍລະຈອນໃນສັງຄົມໄດ້.

**# ຂ່າວ-ພາບ: ທ. ສົມພິດ ທຳມະວົງ**

**ຊາດພັດທະນາ ພາເສດຖະກິດກ້າວໄກ ພ້ອມກັນນຳໃຊ້ເງິນກີບ**